ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ຄະນະປະຈຳ

ເລກທີ 13 /ຄປຈ

ນະຄອນຫລວງວຽງຈັນ, ວັນທີ 8 ສິງຫາ 2006

# ມະຕິຕົກລົງ

## ຂອງຄະນະປະຈຳສະພາແຫ່ງຊາດໃນການຕີຄວາມໝາຍ ມາດຕາ 46 ວັກທີ 5 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ເລກທີ 02/90/ສປສ

ອີງຕາມມາດຕາ 56 ຂໍ້ 2 ຂອງລັດຖະທຳມະນູນ ແຫ່ງ ສປປ ລາວ;

ອີງຕາມມາດຕາ 24 ໃໝ່ ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບເລກທີ 01/ສພຊ, ລົງວັນທີ 6 ພຶດສະພາ 2003 ກ່ຽວກັບສິດ ແລະໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ ໃນການຕີຄວາມໝາຍ, ອະທິບາຍລັດຖະທຳມະນູນ ແລະກົດໝາຍຕ່າງໆ;

ອີງຕາມໜັງສືສະເໜີຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 62/ ສນຍ, ລົງວັນທີ 17 ກໍລະກົດ 2006 ກ່ຽວກັບການຕີຄວາມໝາຍ ມາດຕາ 46 ວັກທີ 5 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ;

ຕາມມາດຕາ 46 ວັກທີ 5 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາໄດ້ກຳນົດວ່າ " ດອກເບ້ຍຂອງການກູ້ຢືມເງິນຈາກທະນາຄານ ໃຫ້ປະຕິບັດຕາມລະບຽບການຂອງທະນາຄານ ທີ່ໃຫ້ກູ້ຢືມເງິນນັ້ນ".

ຄະນະປະຈຳສະພາແຫ່ງຊາດ ຕີຄວາມໝາຍ:

ມາດຕາ 1. ເນື້ອໃນຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາຢູ່ວັກທີ 5 ມາດຕາ 46 ກ່ຽວກັບສັນຍາກູ້ຢືມ ຄຳວ່າ " ທະນາຄານ " ໝາຍເຖິງ ທະນາຄານທຸລະກິດ, ສາຂາທະນາຄານຕ່າງປະເທດ ລວມທັງສະຖາບັນການເງິນອື່ນທີ່ຢູ່ພາຍໃຕ້ການຄຸ້ມຄອງດູແລຂອງທະນາຄານແຫ່ງ ສປປ ລາວ. ສຳລັບສະຖາບັນການເງິນອື່ນທີ່ຢູ່ພາຍໃຕ້ການຄຸ້ມຄອງດູແລຂອງທະນາຄານແຫ່ງ ສປປ ລາວ ນັ້ນ ໝາຍເຖິງ ຫົວໜ່ວຍວິສາຫະກິດ ຊຶ່ງດຳເນີນທຸລະກິດຄ້າຍຄືກັນກັບທະນາຄານຈຳນວນໜຶ່ງ ແຕ່ບໍ່ຮັບເງິນຝາກກະແສລາຍວັນ ແລະບໍ່ໃຫ້ການບໍລິການຊຳລະ ເປັນຕົ້ນແມ່ນ ບໍລິສັດເຊົ່າ-ຊື້, ບໍລິສັດເງິນທຶນ, ສະຖາບັນການເງິນຈຸລະພາກ ແລະອື່ນໆ. ດັ່ງນັ້ນ ວັກທີ 5 ມາດຕາ 46 ກ່ຽວກັບສັນຍາກູ້ຢືມນັ້ນ ຈຶ່ງມີຄວາມໝາຍ

ດັ່ງນີ້: ດອກເບ້ຍຂອງການກູ້ຢືມເງິນຈາກທະນາຄານ ລວມທັງສະຖາບັນການເງິນອື່ນ ແມ່ນໃຫ້ປະຕິບັດຕາມລະບຽບການຂອງທະນາຄານ ຫລືສະຖາບັນການເງິນອື່ນທີ່ໃຫ້ກູ້ຢືມນັ້ນ.

ມາດຕາ 2. ມະຕິຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຄະນະປະຈຳສະພາແຫ່ງຊາດ

ປະທານ

ສະພາແຫ່ງຊາດ ປະທານ

ທອງສິງ ທຳມະວົງ